**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ແອກລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງ ຄົມມະນາຄົມ ຂົນສົ່ງ

ໄປສະນີ ແລະ ກໍ່ສ້າງ — ເລກທີ 906/ກຂສ

ກົມຂົນສົ່ງ — ວັນທີ 08/10/2002

# ບົດແນະນຳ

## ກ່ຽວກັບເງື່ອນໄຂຂອງຜູ້ ຮ້ອງຂໍ້ສອບເສັງເອົາໃບຂັບຂີ່ ພົນລະເຮືອນລາວ

**(ເອກະສານຊ້ອນທ້າຍເລກ II ຂອງຂໍ້ກຳນົດກ່ຽວກັບລະບຽບການໃນການຄຸ້ມຄອງ ແລະ ການສອບເສັງໃບຂັບຂີ່ຍານພາຫະນະຂົນສົ່ງທາງບົກ ເລກທີ 3416/ຄຂປກ, ວັນທີ 04/09/2002 )**

❖ **<u>ເງື່ອນໄຂຂອງຜູ້ຮ້ອງຂໍສອບເສັງເອົາໃບຂັບຂີ່ຂອງພົນລະເຮືອນລາວ.</u>**

ພົນລະເມືອງລາວ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ແລະ ຄົນຕ່າງປະເທດ ທີ່ດຳລົງຊີວິດ ຫລື ປະຕິບັດຫນ້າທີ່ຢູ່ ສປປ ລາວ ທີ່ມີຈຸດປະສົງຢາກສອບເສັງເອົາໃບຂັບຂີ່ພົນລະເຮືອນຂອງລາວ ຕ້ອງມີເງື່ອນໄຂຄົບຖ້ວນດັ່ງນີ້:

- ⇨ ມີອາຍຸຄົບ 15 ປີຂຶ້ນໄປ ສາມາດສອບເສັງເອົາໃບຂັບຂີ່ປະເພດລົດຈັກໄດ້, ແຕ່ຖ້າຈະເສັງເອົາໃບຂັບຂີ່ປະເພດ A1 ຂຶ້ນເມືອ ຕ້ອງມີອາຍຸຄົບ 18 ປີ.
- ⇨ ມີສຸຂະພາບແຂງແຮງດີ ເຊັ່ນ: ຫູນີ, ສາຍຕາດີ ບໍ່ບອດສີ, ບໍ່ເປັນຄົນເສັຍຈິດ, ເປັນເປ້ຍລ່ອຍ ຫລື ເສັຍອົງຄະ.
- ⇨ ຕ້ອງຜ່ານການຝຶກອົບຮົມ ກ່ຽວກັບກົດລະບຽບຈະລາຈອນ ແລະ ທິດສະດີການຂັບຂີ່ ຕາມຫລັກສູດທີ່ ກະຊວງ ຄຂປກ ວາງອອກ ແລະ ມີໃບຢັ້ງຢືນການຝຶກອົບຮົມ.

**<u>ໝາຍເຫດ</u>**: - ຖ້າແມ່ນຄົນຕ່າງປະເທດ ຕ້ອງຮູ້ພາສາອັງກິດ ຫລື ພາສາຝຣັ່ງ ຖ້າຮູ້ພາສາລາວຍິ່ງເປັນການດີ.
- ຫ້າມບໍ່ໃຫ້ໃຊ້ຜູ້ແປພາສາ.

❖ **<u>ການປະກອບເອກະສານຄຳຮ້ອງຂໍສອບເສັງໃບຂັບຂີ່.</u>**

- ໃບຄຳຮ້ອງຕາມແບບຟອມ.
- ໃບຢັ້ງຢືນທີ່ຢູ່ ຕິດຮູບ ແລະ ມີການຢັ້ງຢືນຈາກການຈັດຕັ້ງ ຂອງຕົນສຳລັບ ຄົນຕ່າງປະເທດ, ຈາກອຳນາດການປົກຄອງບ້ານ ທີ່ຕົນມີພູມລຳເນົາຢູ່ ສຳລັບພົນລະເມືອງລາວ ຫລື ຈາກ

ອົງການລັດທີ່ກ່ຽວຂ້ອງ ສຳລັບຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ ຢ່າງຖືກຕ້ອງຕາມກົດໝາຍ ແລະ ມີອາຍຸການນຳໃຊ້ບໍ່ເກີນ 3 ເດືອນ ນັບແຕ່ມື້ອອກໃບຢັ້ງຢືນດັ່ງກ່າວ.

- ໃບຢັ້ງຢືນສຸຂະພາບ 1ໃບ (ສຳລັບຜູ້ຂັບຂີ່ລົດສາມລໍ້ຕິດເຄື່ອງຈັກຂຶ້ນເມືອ).
- ໃບຢັ້ງຢືນການຝຶກອົບຮົມການຂັບຂີ່ (ຖ້າມີ).
- ຮູບຖ່າຍສີ ຂະໜາດ 3x4 ຈຳນວນ 6 ໃບ.
- ສຳເນົາປື້ມສຳມະໂນຄົວ ຂອງຜູ້ກ່ຽວ (ສຳມະໂນຄົວ ແລະ ໃບຢັ້ງຢືນທີ່ຢູ່ຕ້ອງສອດຄ່ອງກັນ), ຖ້າແມ່ນ ພະນັກງານຂອງສູນກາງ ຫຼື ຂອງທ້ອງຖິ່ນ ທີ່ໄດ້ຮັບການແຕ່ງຕັ້ງໃຫ້ໄປປະຕິບັດໜ້າທີ່ປະຈຳຢູ່ແຂວງອື່ນ ທີ່ມີກຳນົດ 1 ປີ ຂຶ້ນເມືອໃຫ້ມີ ໃບຢັ້ງຢືນຮັບປະກັນຈາກອົງການຈັດຕັ້ງທີ່ກ່ຽວຂ້ອງ.
- ຖ້າແມ່ນການເສັງເພີ່ມທ້ອງ ຊຶ່ງຜູ້ຂັບຂີ່ມີໃບຂັບຂີ່ຂອງແຂວງອື່ນແລ້ວ ໃຫ້ຂໍໃບຢັ້ງຢືນແທນສຳນວນເດີມ ຫລື ອັດສຳເນົາບົດບັນທຶກຂໍ້ມູນໃບຂັບຂີ່ (ໃບສີບົວ) ຕິດຄັດພິມ, ໃນກໍລະນີທີ່ໄດ້ຍ້າຍທີ່ຢູ່ເປັນການຖາວອນນັ້ນໃຫ້ຜູ້ກ່ຽວຍົກຍ້າຍສຳນວນເດີມຂອງໃບຂັບຂີ່ຕິດຄັດພ້ອມ.

❖ <u>ເງື່ອນໄຂໃນການຮັບເຂົ້າສອບເສັງ:</u>

- ຜູ້ທີ່ຈະເຂົ້າສອບເສັງເອົາໃບຂັບຂີ່ ຕ້ອງໄດ້ຜ່ານການຝຶກອົບຮົມກ່ຽວກັບ ກົດລະບຽບຈະລາຈອນກໍ່ຄືທິດສະດີການຂັບຂີ່ ຕາມຫລັກສູດທີ່ທາງກະຊວງ ຄຂປກ ໄດ້ກຳນົດໄວ້ ແລະ ມີໃບຢັ້ງຢືນການຝຶກອົບຮົມທີ່ພາກສ່ວນກ່ຽວຂ້ອງ ອອກໃຫ້ຕິດຄັດໃສ່ກັບໃບຄຳຮ້ອງນັ້ນພ້ອມ.
- **ການຝຶກອົບຮົມແບ່ງເປັນສອງພາກຄື :**

**1. ພາກບຳລຸງໄລຍະສັ້ນ ສຳລັບຜູ້ທີ່ຂັບລົດເປັນແລ້ວ:**

ສຳລັບຜູ້ທີ່ຈະສອບເສັງເອົາໃບຂັບຂີ່ປະເພດລົດຈັກ, ລົດສາມລໍ້, ລົດໄຖນາເດີນຕາມທີ່ແກ່ລໍ້ ແລະ ລົດເບົາ ສາມາດເຂົ້າຮັບການຝຶກອົບຮົມພາກບຳລຸງໄລຍະສັ້ນໄດ້ ໂດຍບໍ່ຈຳເປັນຕ້ອງມີໃບຂັບຂີ່ປະເພດໃດມາກ່ອນ. ສຳລັບຜູ້ທີ່ຈະສອບເສັງເອົາໃບຂັບຂີ່ລົດຂົນສົ່ງສິນຄ້າຕ້ອງມີໃບຂັບຂີ່ປະເພດລົດເບົາ ມາແລ້ວຢ່າງໜ້ອຍ ໜຶ່ງປີ ແລະ ຜູ້ຈະສອບເສັງເອົາໃບຂັບຂີ່ປະເພດລົດໂດຍສານ ຈະຕ້ອງມີໃບຂັບຂີ່ ປະເພດລົດຂົນສົ່ງສິນຄ້າມາແລ້ວຢ່າງໜ້ອຍ ໜຶ່ງປີເຊັ່ນດຽວກັນ.

**2. ພາກປົກກະຕິ ສຳລັບຜູ້ທີ່ຂັບລົດບໍ່ທັນເປັນ ຫລື ບໍ່ທັນມີໃບຂັບຂີ່:**

ຜູ້ທີ່ມີຈຸດປະສົງຢາກສອບເສັງເອົາໃບຂັບຂີ່ປະເພດລົດເບົາ (B) ຫລື ລົດຂົນສົ່ງສິນຄ້າ (C) ທີ່ຂັບລົດບໍ່ທັນເປັນ ຫລື ບໍ່ທັນມີໃບຂັບຂີ່ມາກ່ອນ ຈະຕ້ອງໄດ້ຜ່ານການຝຶກອົບຮົມພາກປົກກະຕິ ຫລື ໄລຍະຍາວ ຢູ່ໂຮງຮຽນສອນຂັບລົດ, ຕ້ອງໄດ້ຮຽນຈົບຫລັກສູດ ແລະ ມີໃບຢັ້ງຢືນການຮຽນຈົບຫລັກສູດຈາກທາງໂຮງຮຽນ ແລະ ເຊັນຢັ້ງຢືນຈາກພະແນກ ຄຂປກ ທີ່ໂຮງຮຽນນັ້ນຕັ້ງຢູ່ ເພື່ອນຳໄປປະກອບກັບສຳນວນຄຳຮ້ອງຂໍສອບເສັງໃບຂັບຂີ່ ຍົກເວັ້ນຜູ້ທີ່ຈະສອບເສັງເອົາໃບຂັບຂີ່ປະເພດລົດຈັກ ລົດໄຖນາເດີນຕາມທີ່ແກ່ລໍ້ ແລະ ລົດຕ໊ອກໆ.

**<u>ໝາຍເຫດ:</u>** ສຳລັບແຂວງ, ກຳແພງນະຄອນ ແລະ ເຂດພິເສດໃດທີ່ບໍ່ທັນມີໂຮງຮຽນສອນຂັບລົດ ແມ່ນໃຫ້ປະຕິບັດຕາມຂໍ້ທີ 07 ຂອງມາດຕາ 15 ຂອງຂໍ້ກຳນົດ ເລກທີ່ 3416/ຄຂປກ, ລົງວັນທີ 04/09/2002 ກ່ຽວກັບລະບຽບການໃນການຄຸ້ມຄອງ ແລະ ການສອບເສັງໃບຂັບຂີ່ຍານພາຫະນະທາງບົກ.

**ຫົວໜ້າກົມຂົນສົ່ງ**

**ລັດເດຕະນະມະນີ ຄູນນິວົງ**